ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)
ໃນວັນທີ ແລະສຳລັບໄລຍະເກົ້າເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2025

## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

### ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບງວດເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2025

### ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານ ຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າ ເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

### ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 30 ກັນຍາ 2025 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
6 ພະຈິກ 2025

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທົບທວນຄືນ 30 ກັນຍາ 2025 ກີບ | ກວດສອບ 31 ທັນວາ 2024 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝຸນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 4 | 746,576,178 | 3,766,310,317 |
| ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ | | | |
| ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ - ສັດສ່ວນໝຸນວຽນ | 5 | 57,314,065,951 | 56,448,578,203 |
| ຊັບສິນຖືໄວ້ເພື່ອຂາຍ, ສຸດທິ | 6 | 916,819,362 | 235,054,684 |
| ຊັບສິນໝຸນວຽນອື່ນໆ | 7 | 1,226,778,123 | 1,259,762,400 |
| **ລວມຊັບສິນໝຸນວຽນ** | | 60,204,239,614 | 61,709,705,604 |
| **ຊັບສິນບໍ່ໝຸນວຽນ** | | | |
| ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ | | 2,000,002,700 | 2,000,002,700 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ | | | |
| ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ | 5 | 41,968,099,024 | 20,992,636,585 |
| ຊັບສິນຄົງທີ່ມີຕົວຕົນ, ສຸດທິ | 8 | 611,807,999 | 614,274,814 |
| ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ | | 4 | 4 |
| ຊັບສິນບໍ່ໝຸນວຽນ ອື່ນໆ | | 73,488,102 | 204,898,745 |
| **ລວມຊັບສິນບໍ່ໝຸນວຽນ** | | 44,653,397,829 | 23,811,812,848 |
| **ລວມຊັບສິນ** | | 104,857,637,443 | 85,521,518,452 |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທີ່ບທວນຄືນ 30 ກັນຍາ 2025 ກີບ | ທີ່ບທວນຄືນ 31 ທັນວາ 2024 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນເຈົ້າຂອງ** | | | |
| **ໜີ້ສິນ** | | | |
| **ໜີ້ສິນໝຸນວຽນ** | | | |
| ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ | 9 | 3,667,049,829 | 3,622,503,091 |
| ໜີ້ຕ້ອງສິ່ງອາກອນລາຍໄດ້ | | 1,731,221,705 | 742,996,662 |
| ເງິນກູ້ຢືມໄລຍະສັ້ນ | 10 | 7,000,000,000 | - |
| ໜີ້ສິນໝຸນວຽນອື່ນໆ | | 47,368,332 | 60,055,106 |
| ລວມໜີ້ສິນໝຸນວຽນ | | 12,445,639,866 | 4,425,554,859 |
| **ໜີ້ສິນບໍ່ໝຸນວຽນ** | | | |
| ເງິນກູ້ຢືມໄລຍະຍາວ | 11 | 4,000,000,000 | - |
| ໜີ້ສິນບໍ່ໝຸນວຽນອື່ນໆ | | 226,275,000 | 214,025,000 |
| ລວມໜີ້ສິນບໍ່ໝຸນວຽນ | | 4,226,275,000 | 214,025,000 |
| **ລວມໜີ້ສິນ** | | 16,671,914,866 | 4,639,579,859 |
| **ທຶນເຈົ້າຂອງ** | | | |
| ທຶນຈົດທະບຽນ | | 40,000,000,000 | 40,000,000,000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 12,832,667,550 | 12,832,667,550 |
| ກຳໄລສະສົມ | | | |
| ຄ້ງສະສົມຕາມລະບຽບການ | | 6,486,859,985 | 6,486,859,985 |
| ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ | | 28,866,195,042 | 21,562,411,058 |
| ທຶນເຈົ້າຂອງ | | 88,185,722,577 | 80,881,938,593 |
| **ລວມໜີ້ສິນ ແລະ ທຶນເຈົ້າຂອງ** | | 104,857,637,443 | 85,521,518,452 |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2025

| | ບົດອະທິບາຍ | ທີ່ບທວນຄືນ 30 ກັນຍາ 2025 ກີບ | ທີ່ບທວນຄືນ 30 ກັນຍາ 2024 ກີບ |
|---|---|---|---|
| ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການ | | 29,069,926,990 | 25,308,710,638 |
| ລາຍຮັບອື່ນໆ | 15 | 1,081,225,775 | 18,903,764,742 |
| **ລວມລາຍຮັບ** | | **30,151,152,765** | **44,212,475,380** |
| ລາຍຈ່າຍໃນການບໍລິຫານ | 16 | (18,032,094,075) | (18,680,355,359) |
| ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ | | (2,301,268,734) | (2,208,565,958) |
| ລາຍຈ່າຍການເງິນ | | (747,975,221) | (14,848,042,538) |
| ກຳໄລ/(ຂາດທຶນ)ສຸດທິຈາກອັດຕາແລກປ່ຽນ | | 55,190,954 | (2,162,099,728) |
| **ລວມລາຍຈ່າຍ** | | **(21,026,147,076)** | **(37,899,063,583)** |
| **ກຳໄລກ່ອນອາກອນ** | | **9,125,005,689** | **6,313,411,797** |
| ລາຍຈ່າຍອາກອນລາຍໄດ້ | 14 | (1,821,221,705) | (506,068,835) |
| **ກຳໄລສຸດທິໃນງວດ** | | **7,303,783,984** | **5,807,342,962** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | 17 | 18.26 | 14.52 |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທຶນຈົດທະບຽນ ກີບ | ສ່ວນເພີ່ມມູນຄ່າຮຸ້ນ ກີບ | ກຳໄລສະສົມ ຄ້າງສະສົມຕາມລະບຽບການ ກີບ | ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ | ລວມ ກີບ |
|---|---|---|---|---|---|---|
| ໃນວັນທີ 1 ມັງກອນ 2024 | | 40,000,000,000 | 12,832,667,550 | 5,822,252,913 | 21,580,947,414 | 80,235,867,877 |
| ກຳໄລໃນງວດ | | - | - | - | 5,807,342,962 | 5,807,342,962 |
| ຈ່າຍເງິນປັນຜົນ | 13 | - | - | - | (6,000,000,000) | (6,000,000,000) |
| **ໃນວັນທີ 30 ກັນຍາ 2024** | | **40,000,000,000** | **12,832,667,550** | **5,822,252,913** | **21,388,290,376** | **80,043,210,839** |
| ໃນວັນທີ 1 ມັງກອນ 2025 | | 40,000,000,000 | 12,832,667,550 | 6,486,859,985 | 21,562,411,058 | 80,881,938,593 |
| ກຳໄລໃນງວດ | | - | - | - | 7,303,783,984 | 7,303,783,984 |
| **ໃນວັນທີ 30 ກັນຍາ 2025** | | **40,000,000,000** | **12,832,667,550** | **6,486,859,985** | **28,866,195,042** | **88,185,722,577** |

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທົບທວນຄືນ 30 ກັນຍາ 2025 ກີບ | ທົບທວນຄືນ 30 ກັນຍາ 2024 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນ | | 9,125,005,689 | 6,313,411,797 |
| ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ | | | |
| ໜີ້ສູນ ແລະ ສຳຮອງໜີ້ສົງໄສຈະເສຍ | | 2,301,268,734 | 2,208,565,958 |
| ຄ່າບາຍໜ້າລໍຖ້າຕັດບັນຊີ | | 887,384,026 | 739,700,184 |
| ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | | 30,000,000 | (7,500,000) |
| ຄ່າຫຼ້ຍຫ້ຽນ | 8 | 171,335,815 | 256,987,748 |
| ລາຍຈ່າຍການເງິນ | | 597,388,889 | 14,848,042,538 |
| (ກຳໄລ)ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ | | (48,897,163) | (3,976,228,389) |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ** | | **13,063,485,990** | **20,382,979,836** |
| **ການປ່ຽນແປງທຶນໝຸນວຽນ:** | | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ | | (23,398,186,387) | 6,846,474,342 |
| ຊັບສິນຖືໄວ້ເພື່ອຂາຍ | | (711,577,478) | 78,581,085 |
| ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ | | 164,394,918 | (299,786,832) |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | 44,546,738 | 1,267,285,562 |
| ໜີ້ສິນໝຸນວຽນອື່ນໆ ແລະ ໜີ້ສິນບໍ່ໝຸນວຽນອື່ນໆ | | (644,886) | 183,152,862 |
| **ເງິນສົດ(ໃຊ້ໃນ)/ຈາກກິດຈະກຳດຳເນີນງານ** | | **(10,837,981,105)** | **28,458,686,855** |
| ຈ່າຍຄ່າບາຍໜ້າ | | (1,612,300,000) | (409,600,000) |
| ຈ່າຍດອກເບ້ຍ | | (597,388,889) | (14,806,708,190) |
| ຈ່າຍອາກອນລາຍໄດ້ | | (832,996,662) | (728,016,274) |
| **ເງິນສົດສຸດທິ(ໃຊ້ໃນ)/ຈາກກິດຈະກຳດຳເນີນງານ** | | **(13,880,666,656)** | **12,514,362,391** |

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ໃບລາຍງານກະແສເງິນສົດ
ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທົບທວນຄືນ 30 ກັນຍາ 2025 ກີບ | ທົບທວນຄືນ 30 ກັນຍາ 2024 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ເງິນສົດຈ່າຍຊື້ຊັບສິນບັດຖິ່ທີ່ມີຕົວຕົນ | 8 | (168,869,000) | (122,089,400) |
| ຖອນເງິນຝາກຄ້ຳປະກັນເງິນກູ້ | | - | 2,000,000,000 |
| **ເງິນສົດສຸດທິຮັບຈາກ/(ໃຊ້ໄປໃນ)ກິດຈະກຳການລົງທຶນ** | | (168,869,000) | 1,877,910,600 |
| **ກະແສເງິນສົດຈາກກິດຈະກຳການເງິນ** | | | |
| ຮັບຈາກເງິນກູ້ຢືມໄລຍະສັ້ນ | 10 | 10,500,000,000 | 2,000,000,000 |
| ຮັບຈາກເງິນກູ້ຢືມໄລຍະຍາວ | 11 | 4,000,000,000 | - |
| ຈ່າຍຄືນເງິນກູ້ຢືມ | 10 | (3,500,000,000) | (8,864,819,783) |
| ຈ່າຍເງິນປັນຜົນ | 13 | - | (6,000,000,000) |
| **ເງິນສົດສຸດທິໃຊ້ໄປໃນກິດຈະກຳການເງິນ** | | 11,000,000,000 | (12,864,819,783) |
| **ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | (3,049,535,656) | 1,527,453,208 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ | | 3,766,310,317 | 904,775,929,399 |
| ກຳໄລຈາກອັດຕາແລກປ່ຽນ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 29,801,517 | 47,793,583,660 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ** | 4 | 746,576,178 | 954,096,966,267 |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2025

| | ບິດ ອະທິບາຍ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2025 ກີບ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2024 ກີບ |
|---|---|---|---|
| ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ | | 10,602,186,735 | 8,120,181,809 |
| ລາຍຮັບອື່ນໆ | 15 | 277,979,875 | 6,461,812,992 |
| ລວມລາຍຮັບ | | 10,880,166,610 | 14,581,994,801 |
| ລາຍຈ່າຍໃນການບໍລິຫານ | 16 | (5,539,449,668) | (6,221,469,848) |
| ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ | | (621,926,605) | (740,170,614) |
| ລາຍຈ່າຍການເງິນ | | (415,086,336) | (5,055,321,018) |
| ກຳໄລ/(ຂາດທຶນ)ສຸດທິຈາກອັດຕາແລກປ່ຽນ | | (26,725,368) | (1,590,483,432) |
| ລວມລາຍຈ່າຍ | | (6,603,187,977) | (13,607,444,912) |
| ກຳໄລກ່ອນອາກອນ | | 4,276,978,633 | 974,549,889 |
| ລາຍຈ່າຍອາກອນລາຍໄດ້ | | (857,765,588) | 678,162,000 |
| ກຳໄລສຸດທິໃນງວດ | | 3,419,213,045 | 1,652,711,889 |
| ກຳໄລຕໍ່ຮຸ້ນ | | | |
| ກຳໄລພື້ນຖານຕໍ່ຮຸ້ນ | 17 | 8.55 | 4.13 |

ທ່ານ ມານິບ ຕຣິລົກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2025

| | ບົດ ອະທິບາຍ | ທຶນຈົດທະບຽນ ກີບ | ສ່ວນເພີ່ມມູນຄ່າຮຸ້ນ ກີບ | ກຳໄລສະສົມ ຈັດສັນ ຄ້າງສະສົມຕາມລະບຽບການ ກີບ | ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ | ລວມ ກີບ |
|---|---|---|---|---|---|---|
| ໃນວັນທີ 1 ມໍລະກົດ 2024 | | 40,000,000,000 | 12,832,667,550 | 5,822,252,913 | 19,735,578,487 | 78,390,498,950 |
| ກຳໄລໃນງວດ | | - | - | - | 1,652,711,889 | 1,652,711,889 |
| **ໃນວັນທີ 30 ກັນຍາ 2024** | | **40,000,000,000** | **12,832,667,550** | **5,822,252,913** | **21,388,290,376** | **80,043,210,839** |
| ໃນວັນທີ 1 ມໍລະກົດ 2025 | | 40,000,000,000 | 12,832,667,550 | 6,486,859,985 | 25,446,981,997 | 84,766,509,532 |
| ກຳໄລໃນງວດ | | - | - | - | 3,419,213,045 | 3,419,213,045 |
| **ໃນວັນທີ 30 ກັນຍາ 2025** | | **40,000,000,000** | **12,832,667,550** | **6,486,859,985** | **28,866,195,042** | **88,185,722,577** |

ທ່ານ ມານີ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2025

| | ຍົດ ອະທິບາຍ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2025 ກີບ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2024 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນ | | 4,276,978,633 | 974,549,889 |
| ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ | | | |
| ໜີ້ສູນ ແລະ ສຳຮອງໜີ້ສົງໄສຈະເສຍ | | 621,926,605 | 740,170,614 |
| ຄ່າບາຍໜ້າລໍຖ້າຕັດບັນຊີ | | 360,145,312 | 201,703,584 |
| ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | | 17,500,000 | (1,250,000) |
| ຄ່າໝັ້ຍຫ້ຽນ | | 57,415,651 | 74,453,312 |
| ລາຍຈ່າຍການເງິນ | | 355,055,555 | 5,055,321,018 |
| (ກຳໄລ)ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ | | (5,650,694) | (4,364,318,821) |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ** | | **5,683,371,062** | **2,680,629,596** |
| **ການປ່ຽນແປງທຶນໝຸນວຽນ:** | | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ | | (3,062,001,398) | 1,056,449,149 |
| ຊັບສິນຖືໄວ້ເພື່ອຂາຍ | | (455,736,371) | 26,525,100 |
| ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ | | 101,052,148 | (156,044,194) |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (1,176,019,942) | 388,156,700 |
| ໜີ້ສິນໝຸນວຽນອື່ນໆ ແລະ ໜີ້ສິນບໍ່ໝຸນວຽນອື່ນໆ | | 8,421,220 | 155,655,131 |
| **ເງິນສົດ(ໃຊ້ໃນ)/ຈາກກິດຈະກຳດຳເນີນງານ** | | **1,099,086,719** | **4,151,371,482** |
| ຈ່າຍຄ່ານາຍໜ້າ | | (475,650,000) | (228,800,000) |
| ຈ່າຍດອກເບ້ຍ | | (355,055,555) | (4,903,584,031) |
| ຈ່າຍອາກອນລາຍໄດ້ | | (90,000,000) | (15,000,000) |
| **ເງິນສົດສຸດທິ(ໃຊ້ໃນ)/ຈາກກິດຈະກຳດຳເນີນງານ** | | **178,381,164** | **(996,012,549)** |

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 11 - 21 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2025

| | ບົດອະທິບາຍ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2025 ກີບ | ທົບທວນຄືນ 1 ກໍລະກົດ -30 ກັນຍາ 2024 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ມີຕົວຕົນ | | (42,655,000) | (22,126,640) |
| **ເງິນສົດສຸດທິຮັບຈາກ/(ໃຊ້ໄປໃນ)ກິດຈະກຳການລົງທຶນ** | | (42,655,000) | (22,126,640) |
| **ກະແສເງິນສົດຈາກກິດຈະກຳການເງິນ** | | | |
| ຮັບຈາກເງິນກູ້ຢືມໄລຍະສັ້ນ | | 2,000,000,000 | 2,000,000,000 |
| ຈ່າຍຄືນເງິນກູ້ຢືມ | | (2,000,000,000) | (6,473,600,000) |
| **ເງິນສົດສຸດທິໃຊ້ໄປໃນກິດຈະກຳການເງິນ** | | - | (4,473,600,000) |
| **ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 135,726,164 | (5,491,739,189) |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ | | 609,562,289 | 966,604,347,050 |
| ກຳໄລຈາກອັດຕາແລກປ່ຽນ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 1,287,725 | (7,015,641,594) |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ** | 4 | 746,576,178 | 954,096,966,267 |

ທ່ານ ມານິບ ຕຣິລົກວິໄລ
ຜູ້ອຳນວຍການໃຫ່ຍ

ວັນທີ: 6 ພະຈິກ 2025

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 6 ພະຈິກ 2025

## 1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກ, ຄຳ ແລະ ລົດໄຖ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 6 ພະຈິກ 2025.

## 2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2024.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

## 3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນຍິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ຕັດສິນໃຈທີ່ມີສຳລະສຳຄັນຂອງນະໂຍບາຍການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024.

## 4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | ທົບທວນຄືນ 30 ກັນຍາ 2025 ກີບ | ກວດສອບ 31 ທັນວາ 2024 ກີບ |
|---|---|---|
| ເງິນສົດໃນມື | 17,001,186 | 7,497,930 |
| ເງິນຝາກທະນາຄານ | 729,574,992 | 3,758,812,387 |
| **ລວມ** | **746,576,178** | **3,766,310,317** |

## 5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

| | ທົບທວນຄືນ 30 ກັນຍາ 2025 ກີບ | ກວດສອບ 31 ທັນວາ 2024 ກີບ |
|---|---|---|
| **ໝຸນວຽນ** | | |
| ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ | 762,523,961 | 729,478,372 |
| ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ | 69,857,482,626 | 67,136,730,321 |
| | **70,620,006,587** | **67,866,208,693** |
| ເພີ່ມ ຕົ້ນທຶນທາງກົງ | 530,530,671 | 345,623,435 |
| ຫັກ ສຳຮອງໜີ້ສົງໄສຈະເສຍ | (13,836,471,307) | (11,763,253,925) |
| | **57,314,065,951** | **56,448,578,203** |
| **ບໍ່ໝຸນວຽນ** | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ | 341,408,897 | 43,058,896 |
| ລູກໜີ້ສິນເຊື່ອຜ່ອນຊຳລະ | 41,295,334,784 | 20,926,984,732 |
| | **41,636,743,681** | **20,970,043,628** |
| ເພີ່ມ ຕົ້ນທຶນທາງກົງ | 866,352,116 | 326,343,378 |
| ຫັກ ສຳຮອງໜີ້ສົງໄສຈະເສຍ | (534,996,773) | (303,750,421) |
| | **41,968,099,024** | **20,992,636,585** |
| **ລວມ** | **99,282,164,975** | **77,441,214,788** |

## 5 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ກັນຍາ 2025 ແລະ 31 ທັນວາ 2024, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

| | ທົບທວນຄືນ<br>30 ກັນຍາ 2025<br>ກີບ | ກວດສອບ<br>31 ທັນວາ 2024<br>ກີບ |
|---|---|---|
| ບໍ່ຄົບກຳນົດ | 86,472,947,886 | 68,304,112,047 |
| 1 - 3 ເດືອນ | 11,602,845,854 | 8,088,020,546 |
| 4 ເດືອນ | 452,617,298 | 726,889,906 |
| 5 - 6 ເດືອນ | 867,588,908 | 1,084,626,028 |
| ເກີນ 6 ເດືອນ | 12,860,750,322 | 10,632,603,794 |
| | **112,256,750,268** | **88,836,252,321** |
| ເພີ່ມ ຕົ້ນທຶນທາງກົງ | 1,396,882,787 | 671,966,813 |
| ຫັກ ສຳຮອງໜີ້ສົງໄສຈະເສຍ | (14,371,468,080) | (12,067,004,346) |
| **ລວມ** | **99,282,164,975** | **77,441,214,788** |

## 6 ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

| | ທົບທວນຄືນ<br>30 ກັນຍາ 2025<br>ກີບ | ກວດສອບ<br>31 ທັນວາ 2024<br>ກີບ |
|---|---|---|
| ລົດຈັກ | 956,819,362 | 245,054,684 |
| ຫັກ ເງິນແຮກການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | (40,000,000) | (10,000,000) |
| **ລວມ** | **916,819,362** | **235,054,684** |

## 7 ຊັບສິນໝຸນວຽນອື່ນໆ

| | ທົບທວນຄືນ<br>30 ກັນຍາ 2025<br>ກີບ | ກວດສອບ<br>31 ທັນວາ 2024<br>ກີບ |
|---|---|---|
| ຄ່າໃຊ້ຈ່າຍລ່ວງໜ້າ[1] | 897,660,390 | 955,662,646 |
| ຈ່າຍເງິນລ່ວງໜ້າ | 32,705,000 | 30,500,000 |
| ອື່ນໆ | 296,412,733 | 273,599,754 |
| **ລວມ** | **1,226,778,123** | **1,259,762,400** |

(1) ຈ່າຍລ່ວງໜ້າ ແມ່ນການຊຳລະຄ່າເຊົ່າຫ້ອງການລ່ວງໜ້າ ຈຳນວນ 677 ລ້ານກີບ ແລະ ຄ່າທຳນຽມໃນການກູ້ຢືມ 135 ລ້ານກີບ

## 8 ຊັບສິນຄົງທີ່ມີຕົວຕົນ, ສຸດທິ

| | ກີບ |
|---|---|
| ໃນວັນທີ 1 ມັງກອນ 2025 – ກວດສອບ | 614,274,814 |
| ເພີ່ມຂຶ້ນ | 168,869,000 |
| ຫັກ: ຄ່າຫຼຸ້ຍຫ້ຽນ | (171,335,815) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2025 – ທົບທວນຄືນ** | **611,807,999** |

## 9 ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

| | ທົບທວນຄືນ 30 ກັນຍາ 2025 ກີບ | ກວດສອບ 31 ທັນວາ 2024 ກີບ |
|---|---|---|
| ລາຍຈ່າຍຄ້າງຈ່າຍ[1] | 2,211,284,856 | 1,800,948,719 |
| ໜີ້ຕ້ອງສິ່ງການຄ້າ[2] | 1,336,025,000 | 1,715,002,000 |
| ໜີ້ຕ້ອງສິ່ງອາກອນອື່ນໆ | 119,739,973 | 106,552,372 |
| **ລວມ** | **3,667,049,829** | **3,622,503,091** |

(1) ລາຍຈ່າຍຄ້າງຈ່າຍສ່ວນໃຫຍ່ແມ່ນປະກອບດ້ວຍເງິນອຸດໜູນອອກການຂອງຜູ້ອຳນວຍການໃຫຍ່ຈຳນວນ 599 ລ້ານກີບ, ປະມານການລາຍຈ່າຍເງິນບຳເນັດ (ໂບນັດ) ພະນັກງານປະຈຳປີຈຳນວນ 856 ລ້ານກີບ ແລະ ລາຍຈ່າຍຄ້າງຈ່າຍແກ່ບໍລິສັດກວດສອບ ແລະ ບໍລິການອື່ນໆ 406 ລ້ານກີບ.
(2) ໜີ້ຕ້ອງສິ່ງການຄ້າແມ່ນໜີ້ຕ້ອງຈ່າຍໃຫ້ຜູ້ສະໜອງລົດຈັກ 1,327 ລ້ານກີບ ແລະ ຄຳ 9 ລ້ານກີບ.

## 10 ເງິນກູ້ຢືມໄລຍະສັ້ນ

ລາຍການເຄື່ອນໄຫວຂອງເງິນກູ້ຢືມໄລຍະສັ້ນ ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025 ມີດັ່ງລຸ່ມນີ້:

| | ທົບທວນຄືນ 30 ກັນຍາ 2025 ກີບ | ກວດສອບ 31 ທັນວາ 2024 ກີບ |
|---|---|---|
| ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ | - | 909,430,819,783 |
| ເງິນກູ້ຢືມທີ່ເພີ່ມ | 10,500,000,000 | 2,000,000,000 |
| ຊຳລະເງິນກູ້ຢືມຄືນ | (3,500,000,000) | (925,864,819,783) |
| ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ | - | 14,434,000,000 |
| **ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ** | **7,000,000,000** | **-** |

## 10 ເງິນກູ້ຢືມໄລຍະສັ້ນ (ຕໍ່)

ວັນທີ 11 ມີນາ 2025, ບໍລິສັດໄດ້ເຊັນສັນຍາສິນເຊື່ອໝຸນວຽນກັບທະນາຄານທຸລະກິດພາຍໃນຈຳນວນ 7,000 ລ້ານກີບ, ໄລຍະເວລາ 12 ເດືອນ, ໃນອັດຕາດອກເບ້ຍ 12% ຕໍ່ປີ, ການຊຳລະດອກເບ້ຍແມ່ນຊຳລະເປັນລາຍເດືອນ ແລະ ຊຳລະຄືນຕົ້ນທຶນພາຍຫຼັງສິ້ນສຸດສັນຍາ, ໃນໄລຍະຫົກເດືອນຕົ້ນປີ, ບໍລິສັດໄດ້ຖອນເງິນ 10,500 ລ້ານກວ່າກີບ ແລະ ຊຳລະຄືນ 3,500 ລ້ານກວ່າກີບ.

ສັນຍາສິນເຊື່ອນີ້ແມ່ນບໍ່ມີຫຼັກຊັບຄ້ຳປະກັນ ຫຼື ການຄ້ຳປະກັນ. ຢ່າງໃດກໍ່ຕາມ, ບໍລິສັດໄດ້ອະນຸຍາດໃຫ້ທະນາຄານຫັກເງິນຈາກບັນຊີຂອງຕົນທີ່ໃຊ້ໃນການຮັບເງິນຈາກລູກໜີ້ການເຊົ່າ, ໃນກໍລະນີທີ່ບໍລິສັດບໍ່ຊຳລະຕາມກຳນົດ.

## 11 ເງິນກູ້ຢືມໄລຍະຍາວ

ລາຍການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025 ມີດັ່ງລຸ່ມນີ້:

| | **ທົບທວນຄືນ**<br>**30 ກັນຍາ 2025**<br>**ກີບ** | **ກວດສອບ**<br>**31 ທັນວາ 2024**<br>**ກີບ** |
|---|---|---|
| ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ | - | - |
| ເງິນກູ້ຢືມທີ່ເພີ່ມ | 4,000,000,000 | - |
| ຊຳລະເງິນກູ້ຢືມຄືນ | - | - |
| **ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ** | **4,000,000,000** | **-** |

ວັນທີ 13 ມີນາ 2025 ບໍລິສັດໄດ້ເຊັນສັນຍາກູ້ຢືມກັບທະນາຄານທຸລະກິດພາຍໃນ ຈຳນວນ 4,000 ລ້ານກີບ, ໄລຍະເວລາ 3 ປີ ດ້ວຍອັດຕາດອກເບ້ຍ 14.5% ຕໍ່ປີ, ການຊຳລະດອກເບ້ຍແມ່ນຊຳລະເປັນລາຍເດືອນ ແລະ ຊຳລະຄືນຕົ້ນທຶນເມື່ອຄົບສັນຍາ, ສັນຍາກູ້ຢືມນີ້ແມ່ນຄ້ຳປະກັນໂດຍບໍລິສັດແມ່.

## 12. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ຕາມມາດຕາ 156 ເຊິ່ງກຳນົດການຈັດສັນກຳໄລເປັນຄັງສຳຮອງຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຈົນກວ່າຈະບັນລຸ 50% ຂອງທຶນຮຸ້ນທີ່ໄດ້ຮັບອະນຸຍາດ.

## 13 ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024 ໃນວັນທີ 24 ເມສາ 2025, ຜູ້ຖືຮຸ້ນໄດ້ຮັບຮອງເອົາ ລາຍຮັບສຸດທິເຂົ້າເປັນຄັງສຳຮອງຕາມກົດໝາຍ ຈຳນວນ 664.6 ລ້ານກີບ ແລະ ງົດຈ່າຍເງິນປັນຜົນ ສຳລັບຜົນການດຳເນີນງານ ຂອງປີ 2024 ເນື່ອງຈາກ ບໍລິສັດຕ້ອງສຳຮອງເງິນເພື່ອຮອງຮັບການຂະຫຍາຍທຸລະກິດ ໃນປີ 2025.

## 13 ເງິນປັນຜົນ (ຕໍ່)

ໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 25 ເມສາ 2024, ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີ ຈາກກຳໄລ ສຸດທິ ໄລຍະ 12 ເດືອນ ສິ້ນສຸດວັນທີ 31 ທັນວາ 2023 ໃນລາຄາ 15 ກີບຕໍ່ຮຸ້ນ ລວມມູນຄ່າທັງໝົດ 6,000 ລ້ານກີບ ແລະ ຮັບຮອງລາຍຮັບສຸດທິເຂົ້າຄັງສຳຮອງຕາມກົດໝາຍ ຈຳນວນ 931.6 ລ້ານກີບ.

## 14 ການຈ່າຍອາກອນລາຍໄດ້

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນຈາກ ພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສິ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

ການກະທົບຍອດລະຫວ່າງ ລາຍຈ່າຍອາກອນ ແລະກຳໄລທາງບັນຊີ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2025 ມີດັ່ງນີ້:

| | ກີບ |
|---|---|
| ກຳໄລກ່ອນອາກອນ - ການບັນຊີ | 9,125,005,689 |
| ຜົນກະທົບດ້ານອາກອນ: | |
| ເກັບຄືນເງິນແຮຈາກການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | (30,000,000) |
| ກຳໄລຈາກຕີມູນຄ່າອັດຕາແລກປ່ຽນ[1] | (48,897,163) |
| **ລາຍຮັບທີ່ຕ້ອງເສຍອາກອນ:** | **9,106,108,526** |
| ອັດຕາອາກອນກຳໄລ 20% | **1,821,221,705** |

(1) ກຳໄລຈາກການຕີມູນຄ່າອັດຕາແລກປ່ຽນແມ່ນເພື່ອຈຸດປະສົງໃນການຄຳນວນອາກອນລາຍໄດ້

## 15 ລາຍຮັບອື່ນໆ

ລາຍຮັບອື່ນໆ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ, ປະກອບມີດັ່ງຕໍ່ໄປນີ້:

| | **ທົບທວນຄືນ**<br>ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | **2025** | **2024** |
| | **ກີບ** | **ກີບ** |
| ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ | 13,148,788 | 17,495,691,548 |
| ການປັບໄໝ - ລູກຄ້າ | 956,343,492 | 1,304,840,156 |
| ກຳໄລສຸດທິຈາກການຂາຍຊັບສິນ ລໍຖ້າຂາຍ | - | 47,121,718 |
| ລາຍຮັບອື່ນໆ | 111,733,495 | 56,111,320 |
| **ລວມ** | **1,081,225,775** | **18,903,764,742** |

## 15 ລາຍຮັບອື່ນໆ (ຕໍ່)

ລາຍຮັບອື່ນໆ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ , ປະກອບມີດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | 1 ກໍລະກົດ - 30 ກັນຍາ | |
| | **2025** | **2024** |
| | **ກີບ** | **ກີບ** |
| ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ | 1,299,203 | 6,012,016,427 |
| ການປັບໄໝ - ລູກຄ້າ | 265,653,918 | 425,953,810 |
| ລາຍຮັບອື່ນໆ | 11,026,754 | 23,842,755 |
| **ລວມ** | **277,979,875** | **6,461,812,992** |

## 16 ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ , ປະກອບມີດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | **2025** | **2024** |
| | **ກີບ** | **ກີບ** |
| ຄ່າໃຊ້ຈ່າຍທີ່ກ່ຽວກັບພະນັກງານ | 11,362,633,978 | 11,038,040,921 |
| ຄ່າໃຊ້ຈ່າຍອາກອນອື່ນໆ | 79,353,737 | 1,424,631,880 |
| ຄ່າໃຊ້ຈ່າຍທີ່ກ່ຽວກັບການໂຄສະນາ | 1,229,648,572 | 1,009,677,111 |
| ຄ່າໃຊ້ຈ່າຍອື່ນໆ | 669,111,733 | 897,090,050 |
| ຄ່າບໍລິການກວດສອບ ແລະ ກົດໝາຍ | 767,692,938 | 894,763,304 |
| ຄ່າຕອບແທນຜູ້ບໍລິຫານ | 960,500,000 | 777,156,666 |
| ຄ່າໃຊ້ຈ່າຍໃນການເດີນທາງ | 1,121,161,420 | 943,925,122 |
| ຄ່າເຊົ່າ | 804,532,843 | 603,481,310 |
| ຄ່າທຳນຽມທະນາຄານ ແລະ ອື່ນໆ | 159,162,749 | 382,977,235 |
| ຄ່າໜ້ຍຫ້ຽນ | 171,335,815 | 256,987,748 |
| ຄ່າໃຊ້ຈ່າຍອຸປະກອນຫ້ອງການ | 403,233,180 | 269,615,545 |
| ລາຍຈ່າຍສາທາລະນຸປະໂພກ | 210,887,578 | 182,008,467 |
| ຂາດທຶນສຸດທິຈາກການຂາຍຊັບສິນ ລໍຖ້າຂາຍ | 92,839,532 | - |
| **ລວມ** | **18,032,094,075** | **18,680,355,359** |

## 16 ລາຍຈ່າຍໃນການບໍລິຫານ (ຕໍ່)

ລາຍຈ່າຍໃນການບໍລິຫານ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ , ປະກອບມີດັ່ງຕໍ່ໄປນີ້:

| | **ທົບທວນຄືນ**<br>ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | 1 ກໍລະກົດ - 30 ກັນຍາ | |
| | **2025** | **2024** |
| | **ກີບ** | **ກີບ** |
| ຄ່າໃຊ້ຈ່າຍທີ່ກ່ຽວກັບພະນັກງານ | 3,302,516,914 | 3,639,531,410 |
| ຄ່າໃຊ້ຈ່າຍອາກອນອື່ນໆ | 25,882,625 | 483,962,300 |
| ຄ່າໃຊ້ຈ່າຍທີ່ກ່ຽວກັບການໂຄສະນາ | 394,183,204 | 386,173,713 |
| ຄ່າໃຊ້ຈ່າຍອື່ນໆ | 214,799,405 | 207,226,854 |
| ຄ່າບໍລິການກວດສອບ ແລະ ກົດໝາຍ | 224,635,246 | 319,909,824 |
| ຄ່າຕອບແທນຜູ້ບໍລິຫານ | 333,000,000 | 297,656,666 |
| ຄ່າໃຊ້ຈ່າຍໃນການເດີນທາງ | 381,735,212 | 373,597,361 |
| ຄ່າເຊົ່າ | 268,853,677 | 217,743,282 |
| ຄ່າທຳນຽມທະນາຄານ ແລະ ອື່ນໆ | 54,796,852 | 51,858,075 |
| ຄ່າຫຼ້ຍຫ້ຽນ | 57,415,651 | 74,453,312 |
| ຄ່າໃຊ້ຈ່າຍອຸປະກອນຫ້ອງການ | 147,896,561 | 93,187,192 |
| ລາຍຈ່າຍສາທາລະນຸປະໂພກ | 75,399,593 | 64,791,137 |
| ຂາດທຶນສຸດທິຈາກການຂາຍຊັບສິນ ລໍຖ້າຂາຍ | 58,334,728 | 11,378,722 |
| **ລວມ** | **5,539,449,668** | **6,221,469,848** |

## 17 ກຳໄລຜົ້ນຖານຕໍ່ຮຸ້ນ

ກຳໄລຜົ້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນ ຂອງຮຸ້ນສາມັນທີ່ມີທັ້ງໝົດ ດັ່ງຕໍ່ໄປນີ້:

ກຳໄລຜົ້ນຖານຕໍ່ຮຸ້ນ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ , ເພື່ອປຽບທຽບດັ່ງຕໍ່ໄປນີ້:

| | **ທົບທວນຄືນ**<br>ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | **2025** | **2024** |
| | **ກີບ** | **ກີບ** |
| ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ) | 7,303,783,984 | 5,807,342,962 |
| ຈຳນວນຂອງຮຸ້ນສາມັນ (ຮຸ້ນ) | 400,000,000 | 400,000,000 |
| ກຳໄລຜົ້ນຖານຕໍ່ຮຸ້ນ (ກີບ) | 18.26 | 14.52 |

## 17 ກຳໄລພື້ນຖານຕໍ່ຮຸ້ນ (ຕໍ່)

ກຳໄລພື້ນຖານຕໍ່ຮຸ້ນ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ , ເພື່ອປຽບທຽບດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | 1 ກໍລະກົດ - 30 ກັນຍາ | |
| | **2025** | **2024** |
| | **ກີບ** | **ກີບ** |
| ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ) | 3,419,213,045 | 1,652,711,889 |
| ຈຳນວນຂອງຮຸ້ນສາມັນ (ຮຸ້ນ) | 400,000,000 | 400,000,000 |
| ກຳໄລພື້ນຖານຕໍ່ຮຸ້ນ (ກີບ) | 8.55 | 4.13 |

## 18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

### ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ , ມີດັ່ງນີ້:

| | ທົບທວນຄືນ<br>ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | **2025** | **2024** |
| | **ກີບ** | **ກີບ** |
| **ລາຍຈ່າຍອື່ນໆ:** | | |
| ພາກສ່ວນທີ່ກ່ຽວຂ້ອງ - ລາຍຈ່າຍດອກເບ້ຍ | - | 14,086,454,820 |
| ຜູ້ຖືຫຸ້ນ - ລາຍຈ່າຍດອກເບ້ຍ | - | 23,671,232 |
| ຜູ້ຖືຫຸ້ນ - ຄ່າຄໍ້າປະກັນ | - | 639,378,109 |
| | **-** | **14,749,504,161** |

## 18 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

**ກ.** ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ , ມີດັ່ງນີ້:

| | ທົບທວນຄືນ<br>ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | 1 ກໍລະກົດ - 30 ກັນຍາ | |
| | **2025** | **2024** |
| | **ກີບ** | **ກີບ** |
| **ລາຍຈ່າຍອື່ນໆ:** | | |
| ພາກສ່ວນທີ່ກ່ຽວຂ້ອງ - ລາຍຈ່າຍດອກເບ້ຍ | - | 4,905,676,715 |
| ຜູ້ຖືຫຸ້ນ - ລາຍຈ່າຍດອກເບ້ຍ | - | 23,671,232 |
| ຜູ້ຖືຫຸ້ນ - ຄ່າຄ້ຳປະກັນ | - | 114,607,012 |
| | **-** | **5,043,954,959** |

**ຂ. ຄ່າຕອບແທນຜູ້ບໍລິຫານຫຼັກ**

ຄ່າຕອບແທນໃຫ້ຜູ້ບໍລິຫານ ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ , ມີດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>ສຳລັບໄລຍະເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | **2025** | **2024** |
| | **ກີບ** | **ກີບ** |
| ຜົນປະໂຫຍດໄລຍະສັ້ນ ( ບົດອະທິບາຍ 16) | 960,500,000 | 777,156,666 |

ຄ່າຕອບແທນໃຫ້ຜູ້ບໍລິຫານ ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ , ມີດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ທີ່ ສິ້ນສຸດວັນທີ 30 ກັນຍາ | |
|---|---|---|
| | 1 ກໍລະກົດ - 30 ກັນຍາ | |
| | **2025** | **2024** |
| | **ກີບ** | **ກີບ** |
| ຜົນປະໂຫຍດໄລຍະສັ້ນ ( ບົດອະທິບາຍ 16) | 333,000,000 | 297,656,666 |

## 19 ພາລະຜູກພັນ

### ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານ

ບໍລິສັດ ມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີຫ້ອງການ

ໃນວັນທີ 30 ກັນຍາ 2025 ແລະ ວັນທີ 31 ທັນວາ 2024, ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

| | ທົບທວນຄືນ<br>30 ກັນຍາ 2025<br>ກີບ | ກວດສອບ<br>31 ທັນວາ 2024<br>ກີບ |
|---|---|---|
| ພາຍໃນ 1 ປີ | 411,293,153 | 171,382,077 |
| ເກີນ 1 ປີ ແຕ່ບໍ່ເກີນ 5 ປີ | 2,309,308,548 | 2,292,017,078 |
| **ລວມ** | **2,720,601,701** | **2,463,399,155** |

## 20 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງບົດລາຍງານຖານະການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກໃນຂໍ້ມູນການເງິນກາງປີ ຂອງບໍລິສັດ.